ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 2607 /ທຄຕລ ....2022......
ນະຄອນຫຼວງວຽງຈັນ, ວັນທີ: ......06 OCT 2022........

# ໜັງສືແຈ້ງເຊີນ

**ເຖິງ:** ບໍລິສັດ ບໍລິການສິ່ງພິມ ແລະ ບັນດາໂຮງພິມ ທີ່ນັບຖື.
**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນສິ່ງພິມ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງເຊີນມາຍັງທ່ານຜູ້ສະໜອງ ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນລາຄາ ຜະລິດ ສິ່ງພິມ ເພື່ອນຳໃຊ້ ເຂົ້າໃນວຽກງານ ຂອງ ທຄຕລ ລາຍລະອຽດສິນຄ້າ ມີດັ່ງຕາຕະລາງລຸ່ມນີ້:

| ລາຍການ | ຮູບປະກອບ | ລາຍລະອຽດ |
|---|---|---|
| 1. ເຈ້ຍກົດບັດຄິວກໍ້ນ້ອຍ<br>ຈຳນວນ 2.000 ກໍ້ |  | - ເຈ້ຍກົດບັດຄິວກໍ້ນ້ອຍ ຂະໜາດ ກວ້າງ 79 ມມ, ເສັ້ນຜ່າສູນກາງ 80 ມມ, ແກນຮອບນອກ 20 ມມ, ແກນຮອບໃນ 18 ມມ, ເຈ້ຍໜາ 58 gsm.<br>- ການຫຸ້ມຫໍ່: 02 ກໍ້/ແພັກ, 25 ແພັກ/ແກັດ (ແພັກດ້ວຍຖົງດຳກັນແສງ), ລະບຸລາຍລະອຽດສິນຄ້າ ແລະ ຈຳນວນ ຕິດໃສ່ແກັດ. |
| 2. ໃບມອບເງິນສົດ 3P<br>ຈຳນວນ 1.000.000 ຊຸດ |  | - ໃບມອບເງິນສົດ 3P: ຂະໜາດ 16 x 18.8 cm, ໃຊ້ເຈ້ຍເຄມີ 03 ໃບ/ຊຸດ, (ເຈ້ຍຍີ່ຫໍ້ OJI ເກດ A), ພິມ 04 ສີ, ໃຊ້ກາວແຍກຊຸດ.<br>- ການຫຸ້ມຫໍ່: 500 ຊຸດ/ຫໍ່, 05 ຫໍ່/01 ແພັກ ແລະ ຕິດຕົວຢ່າງໃສ່ທຸກຫໍ່ ພ້ອມລະບຸລາຍອຽດຂອງສິນຄ້າ. |
| 3. ປ້າຍຂາຕັ້ງ<br>ຈຳນວນ 12.000 ຊຸດ |  | - ປ້າຍຂາຕັ້ງ OnePay 01 ຊຸດ ປະກອບມີ:<br>- ແຜ່ນພາດສະຕິກ + ພິມສະຕິກ 4 ສີ + ແຜ່ນສະຕິກເກີ້ໃສຕິດບາໂຄດ 09*09 ຊມ, ຂະໜາດປ້າຍຂາຕັ້ງ: 15*21 ຊມ + 6 ຊມ (ຕີນຕັ້ງ).<br>- ການຫຸ້ມຫໍ່: ແພັກຕິດກັນ (ແຜ່ນພາດສະຕິກ + ແຜ່ນສະຕິກເກີ້ໃສ) ຈຳນວນ 10 ຊຸດ/ແພັກ, 05 ແພັກ/ແກັດ "ພ້ອມລະບຸລາຍລະອຽດສິນຄ້າດ້ານນອກກ່ອງ". |
| 4. ສະຕິກເກີ້<br>ຈຳນວນ 10.000 ຊຸດ |  | - ສະຕິກເກີ້ OnePay 01 ຊຸດ ປະກອບມີ:<br>- ສະຕິກເກີ້ (10,5*14,5 ຊມ), ແຜ່ນພິມ 7*7 ຊມ<br>- ການຫຸ້ມຫໍ່: (ສະຕິກເກີ້ 100 ແຜ່ນ + ແຜ່ນພິມ 100 ແຜ່ນ ແພັກດ້ວຍ ພລາດສະຕິກ) 100 ຊຸດ/ແພັກ, 05 ແພັກ/ມັດ "ພ້ອມຕິດລາຍລະອຽດສິນຄ້າທຸກແພັກ". |

ໝາຍເຫດ:

1. ຜູ້ສະໜອງສາມາດເຂົ້າຮ່ວມປະມູນທຸກລາຍການ ຫຼື ລາຍການໃດໜຶ່ງ ກໍ່ໄດ້, ສ່ວນການພິຈາລະນາແມ່ນ ທຄຕລ ຈະຄັດເລືອກເປັນແຕ່ລະລາຍການ, ຄັດເລືອກຈາກຫຼາຍເງື່ອນໄຂ, ບໍ່ໄດ້ພິຈາລະນາພຽງແຕ່ມູນຄ່າຢ່າງດຽວ.
2. ສາມາດມາເບິ່ງຕົວຢ່າງສິນຄ້າ/ສິ່ງພິມ ໄດ້ ທີ່ ພະແນກຫ້ອງການບໍລິຫານ-ການເງິນ, ສຳນັກງານໃຫຍ່ ທຄຕລ, ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ອາຄານ C.



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

❖ **ເງື່ອນໄຂຂອງບໍລິສັດ, ໂຮງພິມພາກລັດ ແລະ ເອກະຊົນ ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້:**

➢ **ເອກະສານ ຊອງທີ 01:**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດດ້ານສິ່ງພິມ, ດຳເນີນທຸລະກິດ ຢ່າງໜ້ອຍ 02 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2021 ແລະ ຮ່າງແບບຟອມຂອງ ທຄຕລ ທີ່ຄັດຕິດມາພ້ອມນີ້ + ສິນຄ້າຕົວຢ່າງ ຢ່າງລະ 1-2 ອັນ.
2. ກຳນົດຍື່ນລາຍລະອຽດຂ້າງເທິງ ສາມາດຍື່ນໄດ້ນັບຈາກ ວັນນີ້ ເຖິງ ວັນພຸດ ວັນທີ 19/10/2022 ກ່ອນເວລາ 11:00 ໂມງ ໂດຍການສົ່ງຟາຍສະແກນເປັນ PDF ເຂົ້າມາທີ່ E-mail: procurement-@bcel.com.la

➢ **ເອກະສານ ຊອງທີ 02 (ປິດຊອງ):**

1. ທຄຕລ ຈະແຈ້ງສະເພາະຜູ້ທີ່ຜ່ານເງື່ອນໄຂ ຮອບທີ 01 ເທົ່ານັ້ນ ເພື່ອເຂົ້າມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າມາຮ່ວມ ໃນວັນອັງຄານ, ທີ 25/10/2022 ເວລາ 14:00 ໂມງ ທີ່ ຊັ້ນ 05, ອາຄານ C.
2. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນພ້ອມທັງລະບຸມື້ໝົດກຳນົດເວລາໃນໃບສະເໜີລາຄາດັ່ງກ່າວພ້ອມ (Expire date) ຢ່າງໜ້ອຍ 15 ວັນລັດຖະການ.

__**ໝາຍເຫດ:**__

1. ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.
2. ການຊຳລະແມ່ນ ຈ່າຍເງິນ ຕາມມູນຄ່າສັ່ງຊື້ແຕ່ລະລາຍການ ພາຍຫຼັງໄດ້ຮັບເຄື່ອງຄົບຖ້ວນ ພ້ອມທັງໄດ້ຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ ແລະ ກວດກາຄວາມຖືກຕ້ອງຈາກທັງສອງຝ່າຍ ພາຍໃນໄລຍະ 30 ວັນລັດຖະການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານຜູ້ມີຄວາມສົນໃຈ ຍື່ນຊອງເຂົ້າຮ່ວມການປະມູນລາຄາໃນຄັ້ງນີ້ດ້ວຍ.

ຮກ **ຜູ້ອຳນວຍການ**

ທະນາຄານ ແຫ່ງ ສປປ ລາວ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC ນະຄອນ ວຽງຈັນ ຫລວງ

ນັນທະລາດ ແກ້ວປະເສີດ

ເບີໂທປະສານງານ: 021 213 200-415

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............/ທຄຕລ, ລົງວັນທີ .......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ທີ່ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ......... | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | .... ປີ | (ໃຫ້ລະບຸ) | | ພາຍນ ຫຼື ຕ່າງປະເທດ | .... ປີ | ...... | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ .......................
ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:
ຊື່:
ໂທ: